ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ເລກທີ 3541 /ກສ

ນະຄອນຫຼວງວຽງຈັນ, ວັນທີ 12 AUG 2026

# ຂໍ້ຕົກລົງ
# ວ່າດ້ວຍກົນໄກການຈັດຕັ້ງປະຕິບັດ
# ວຽກງານການລົງທຶນໃນກະຊວງກະສິກຳ ແລະ ສິ່ງແວດລ້ອມ

- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 62/ສພຊ, ລົງວັນທີ 28 ມິຖຸນາ 2024;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ຄຳສັ່ງວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານ ໃນການດຳເນີນທຸລະກິດຢູ່ ສປປ ລາວ ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018;
- ອີງຕາມ ຄຳສັ່ງວ່າດ້ວຍການປັບປຸງວຽກງານການບໍລິການ ການອອກໃບອະນຸຍາດລົງທຶນ ແລະ ການອອກໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ 03/ນຍ, ລົງວັນທີ 21 ມັງກອນ 2020;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 4787/ຫກ, ລົງວັນທີ 5 ສິງຫາ 2026.

## ລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ຄວາມຮັບຜິດຊອບ, ຂອບເຂດສິດ ຂັ້ນຕອນ, ກົນໄກປະສານງານ ລະຫວ່າງ ຫ້ອງການ, ບັນດາກົມ, ກອງ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃນການຄົ້ນຄວ້າເອກະສານການສະເໜີຂໍລົງທຶນຕາມກົນໄກປະຕູດຽວ, ການຂໍອອກ ແລະ ຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ສິ່ງແວດລ້ອມ ແລະ ການຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງກະສິກຳ ແລະ ປ່າໄມ້ ທີ່ຢູ່ໃນຄວາມຮັບຜິດຊອບ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ເພື່ອຮັບປະກັນໃຫ້ວຽກງານດັ່ງກ່າວ ດຳເນີນໄປຢ່າງມີປະສິດທິພາບ, ປະສິດທິຜົນ, ມີຄວາມກົມກຽວ, ວ່ອງໄວ, ໂປ່ງໃສ, ທັນເວລາ, ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແນໃສ່ຮັບປະກັນການເປັນເສນາທິການທີ່ດີໃຫ້ແກ່ການນຳ ກະຊວງ ໃນການຈັດຕັ້ງປະຕິບັດວຽກງານການລົງທຶນພາຍໃນກະຊວງກະສິກຳ ແລະ ສິ່ງແວດລ້ອມ ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ຕາມທິດ ສີຂຽວ ແລະ ຍືນຍົງ.

**ມາດຕາ 2 ກົນໄກການຈັດຕັ້ງປະຕິບັດວຽກງານການລົງທຶນ ໃນກະຊວງກະສິກຳ ແລະ ສິ່ງແວດລ້ອມ**

ກົນໄກການຈັດຕັ້ງປະຕິບັດວຽກງານການລົງທຶນ ໃນກະຊວງກະສິກຳ ແລະ ສິ່ງແວດລ້ອມ ແມ່ນ ການປະສານງານ ລະຫວ່າງຫ້ອງການ, ກັບບັນດາກົມ, ກອງ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະ

ຊວງ ກ່ຽວກັບການຄົ້ນຄວ້າເອກະສານການສະເໜີຂໍລົງທຶນຕາມກົນໄກປະຕູດຽວ, ການຂໍອອກ ແລະ ຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ສິ່ງແວດລ້ອມ ແລະ ການຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງກະສິກຳ ແລະ ປ່າໄມ້ ທີ່ຢູ່ໃນຄວາມຮັບຜິດຊອບຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ກິດຈະການສຳປະທານ** ໝາຍເຖິງ ກິດຈະການທີ່ຜູ້ລົງທຶນ ໄດ້ຮັບອະນຸຍາດໃນການສຳປະທານ ຈາກລັດຕາມກົດໝາຍ ເພື່ອພັດທະນາ ແລະ ດຳເນີນທຸລະກິດໃດໜຶ່ງ ເປັນຕົ້ນ ການສຳປະທານທີ່ດິນ ເພື່ອດຳເນີນກິດຈະການກະສິກຳປູກໄມ້, ແຫຼ່ງທ່ອງທ່ຽວ, ເຂດອຸດສາຫະກຳ, ນິຄົມອຸດສາຫະກຳ, ເຂດເຕັກໂນໂລຊີລະດັບສູງ, ການພັດທະນາເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ, ການພັດທະນາເປັນຕົວເມືອງໃໝ່, ທາງດ່ວນ, ເຂດໂລຊິດສະຕິກ, ທ່າບົກ, ທ່າເຮືອ, ທາງລົດໄຟ, ສະໜາມບິນ, ເສັ້ນທາງ, ການພັດທະນາແຫຼ່ງພະລັງງານໄຟຟ້າ ແລະ ແຮ່ທາດ;

2. **ກິດຈະການໃນບັນຊີຄວບຄຸມ** ໝາຍເຖິງ ປະເພດທຸລະກິດ ທີ່ມີຜົນກະທົບຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ເພື່ອຮັບປະກັນຄວາມສົມດູນໃນການພັດທະນາບັນດາຂະແໜງການເສດຖະກິດ ແລະ ສັງຄົມ ຊຶ່ງຕ້ອງໄດ້ຜ່ານການພິຈາລະນາ ໂດຍບັນດາຂະແໜງການທີ່ກ່ຽວຂ້ອງ ກ່ອນການອະນຸຍາດລົງທຶນ;

3. **ກິດຈະການໃນບັນຊີບໍ່ຄວບຄຸມ** ໝາຍເຖິງ ກິດຈະການເປີດກວ້າງການລົງທຶນທົ່ວໄປ ທີ່ສາມາດແຈ້ງຂຶ້ນທະບຽນວິສາຫະກິດ ແລະ ຂໍອະນຸຍາດດຳເນີນທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;

**ມາດຕາ 4 ຫຼັກການກ່ຽວກັບການຈັດຕັ້ງປະຕິບັດວຽກງານການລົງທຶນ**

ການຈັດຕັ້ງປະຕິບັດວຽກງານການລົງທຶນ ໃຫ້ປະຕິບັດຕາມ ຫຼັກການ ດັ່ງນີ້:

1. ສອດຄ່ອງ ກັບລັດຖະທຳມະນູນ, ກົດໝາຍ, ຄຳສັ່ງ, ລະບຽບການ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ພາຍໃນກະຊວງກະສິກຳ ແລະ ສິ່ງແວດລ້ອມ;

3. ຮັບປະກັນການດຳເນີນໄປຢ່າງມີປະສິດທິພາບ, ປະສິດທິຜົນ, ມີຄວາມກົມກຽວ, ວ່ອງໄວ, ໂປ່ງໃສ, ທັນເວລາ ແລະ ສາມາດກວດສອບໄດ້;

4. ຮັບປະກັນການປະສານສົມທົບກັນລະຫວ່າງ ຫ້ອງການ, ບັນດາກົມ, ກອງ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ ກ່ຽວກັບການຈັດຕັ້ງປະຕິບັດວຽກງານການລົງທຶນ ຢ່າງປົກກະຕິ;

5. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງລັດ, ປະຊາຊົນ, ລວມໝູ່ ແລະ ຜູ້ລົງທຶນ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຫ້ອງການ, ບັນດາກົມ, ກອງ, ສະຖາບັນ ແລະ ຫົວໜ່ວຍວິຊາການ ລະດັບສອງ ທີ່ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ ລວມທັງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃນການຈັດຕັ້ງປະຕິບັດວຽກງານການລົງທຶນ ພາຍໃນກະຊວງກະສິກຳ ແລະ ສິ່ງແວດລ້ອມ.

## ໝວດທີ 2
## ການຄົ້ນຄວ້າວຽກງານການລົງທຶນຕາມກົນໄກປະຕູດຽວ

**ມາດຕາ 6 ການຄົ້ນຄວ້າວຽກງານການລົງທຶນຕາມກົນໄກປະຕູດຽວ**

ການຄົ້ນຄວ້າວຽກງານການລົງທຶນຕາມກົນໄກປະຕູດຽວ ແມ່ນ ການຄົ້ນຄວ້າປະກອບຄຳເຫັນຕາມໜັງສືສະ

ເໜີຂໍລົງທຶນ ຕາມກົນໄກປະຕູດຽວ ທີ່ໄດ້ກຳນົດໄວ້ໃນກິດຈະການຢູ່ໃນບັນຊີຄວບຄຸມ ແລະ ກິດຈະການສຳປະທານ ລວມທັງຍັ້ງຢືນການສຳຫຼວດວັດແທກທີ່ດິນ.

**ມາດຕາ 7 ຂັ້ນຕອນການຄົ້ນຄວ້າວຽກງານການລົງທຶນ ຕາມກົນໄກປະຕູດຽວ ໃນກິດຈະການບັນຊີຄວບຄຸມ ຫຼື ກິດຈະການສຳປະທານ.**

ຄົ້ນຄວ້າວຽກງານການລົງທຶນ ຕາມກົນໄກປະຕູດຽວ ໃນກິດຈະການບັນຊີຄວບຄຸມ ຫຼື ກິດຈະການສຳປະທານ ປະກອບມີຂັ້ນຕອນ ດັ່ງນີ້:

1. ການຮັບເອກະສານການລົງທຶນຕາມກົນໄກປະຕູດຽວ.

ພາຍຫຼັງທີ່ຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຮັບເອກະສານຂໍການປະກອບຄຳເຫັນຈາກຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຫຼື ຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ໃຫ້ດຳເນີນການກວດກາເອກະສານ ຖ້າຫາກເຫັນວ່າເອກະສານຄົບຖ້ວນແລ້ວ ໃຫ້ປ້ອນເຂົ້າຖານຂໍ້ມູນໃນລະບົບຄອມພິວເຕີ ພ້ອມທັງເຮັດໜັງສືສະເໜີ ຫຼື ສະໂໜດນຳສົ່ງ ຕາມແຕ່ລະກໍລະນີ ພາຍໃນກຳນົດເວລາບໍ່ເກີນ ສອງ ວັນລັດຖະການ ນັບແຕ່ໄດ້ຮັບເອກະສານ ຫຼື ທິດຊີ້ນຳຂອງການນຳ ກະຊວງ ເປັນຕົ້ນໄປ ຫາບັນດາກົມ, ກອງ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າປະກອບຄຳເຫັນທາງດ້ານວິຊາການ ຕາມກຳນົດເວລາທີ່ໄດ້ລະບຸໄວ້ໃນໜັງສືສະເໜີ ຫຼື ສະໂໜດນຳສົ່ງ ຕາມແຕ່ລະກໍລະນີ;

ໃນກໍລະນີ ເອກະສານບໍ່ຄົບຖ້ວນ ຫຼື ບໍ່ຈະແຈ້ງ ຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕ້ອງເຮັດໜັງສືຫາຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຫຼື ຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຫຼື ຜູ້ລົງທຶນ ເພື່ອປະກອບເອກະສານເພີ່ມເຕີມ ໃຫ້ຄົບຖ້ວນ ພາຍໃນກຳນົດເວລາ ສອງ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານຈາກພາກສ່ວນດັ່ງກ່າວ ເປັນຕົ້ນໄປ.

2. ການຄົ້ນຄວ້າປະກອບຄຳເຫັນ

ພາຍຫຼັງບັນດາກົມ, ກອງ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງທີ່ກ່ຽວຂ້ອງ ໄດ້ຮັບໜັງສືສະເໜີ ຫຼື ສະໂໜດນຳສົ່ງສຳນວນເອກະສານກ່ຽວກັບການສະເໜີຂໍລົງທຶນຈາກຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລ້ວໃຫ້ດຳເນີນການຄົ້ນຄວ້າປະກອບຄຳເຫັນທາງດ້ານວິຊາການ ນຳສົ່ງໃຫ້ຫ້ອງການ ເພື່ອສັງລວມຄຳເຫັນລາຍງານການນຳ ກະຊວງ ພິຈາລະນາ ແລະ ໃຫ້ທິດຊີ້ນຳ. ກຳນົດເວລາໃນການຄົ້ນຄວ້າປະກອບຄຳເຫັນຂອງບັນດາກົມ, ກອງ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງທີ່ກ່ຽວຂ້ອງ ໃຫ້ປະຕິບັດ ດັ່ງນີ້:

1) ສຳລັບກິດຈະການສຳປະທານ ໃນການຄົ້ນຄວ້າປະກອບຄຳເຫັນ ພາຍໃນກຳນົດເວລາ ສິບຫ້າ ວັນ ນັບແຕ່ວັນທີ່ໄດ້ຮັບໜັງສືສະເໜີ ຫຼື ສະໂໜດນຳສົ່ງ ຈາກຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຕົ້ນໄປ;

2) ສຳລັບກິດຈະການໃນບັນຊີຄວບຄຸມ ໃນການຄົ້ນຄວ້າປະກອບຄຳເຫັນ ພາຍໃນກຳນົດເວລາ ສີ່ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບໜັງສືສະເໜີ ຫຼື ສະໂໜດນຳສົ່ງ ຈາກຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຕົ້ນໄປ.

ໃນກໍລະນີ ຫາກບັນດາກົມ, ກອງ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງທີ່ກ່ຽວຂ້ອງ ຫາກເຫັນວ່າໃນສຳນວນເອກະສານຂອງໂຄງການ ຫຼື ກິດຈະການ ບໍ່ຖືກຕ້ອງ ຫຼື ບໍ່ມີຂໍ້ມູນລະອຽດ ກ່ຽວກັບພື້ນທີ່ ກໍໃຫ້ມີຄຳເຫັນທາງດ້ານຫຼັກການ ຕາມກຳນົດເວລາ ທີ່ໄດ້ກຳນົດໄວ້ຂ້າງເທິງນີ້.

3. ການສັງລວມລາຍງານ

ພາຍຫຼັງຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ໄດ້ຮັບເອກະສານການປະກອບຄຳເຫັນທາງດ້ານວິຊາການຈາກບັນດາກົມ, ກອງ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງທີ່ກ່ຽວຂ້ອງ ຄົບຖ້ວນແລ້ວ ຫ້ອງການ ກະຊວງ ຕ້ອງສັງລວມລາຍງານການນຳກະຊວງກະສິກຳ ແລະ ສິ່ງແວດລ້ອມ ພາຍໃນກຳນົດເວລາ ສາມ ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳເຫັນຈາກພາກສ່ວນກ່ຽວຂ້ອງ ຢ່າງຄົບຖ້ວນ ເປັນຕົ້ນໄປ.

ໃນກໍລະນີ ຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຫາກໄດ້ຮັບເອກະສານບໍ່ຄົບຖ້ວນຕາມກຳນົດເວລາ ຫຼື ຂໍ້ມູນໃດໜຶ່ງບໍ່ມີຄວາມຊັດເຈນ ຫຼື ການປະກອບຄຳເຫັນບໍ່ເປັນເອກະພາບກັນ ໃຫ້ດຳເນີນການຈັດກອງປະຊຸມປຶກສາຫາລື ເພື່ອເປັນເອກະພາບກ່ອນລາຍງານການນຳກະຊວງກະສິກຳ ແລະ ສິ່ງແວດລ້ອມ.

4. ການອອກໜັງສືທາງລັດຖະການປະກອບຄຳເຫັນ.

ພາຍຫຼັງຄະນະນຳກະຊວງກະສິກຳ ແລະ ສິ່ງແວດລ້ອມ ໄດ້ມີຄຳເຫັນ ຫຼື ມີທິດຊີ້ນຳແລ້ວ ໃຫ້ອອກໜັງສືທາງລັດຖະການໃນນາມລັດຖະມົນຕີ ຫຼື ຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕາມແຕ່ກໍລະນີ ເພື່ອແຈ້ງຕອບຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຫຼື ຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພາຍໃນກຳນົດເວລາ ສາມ ວັນລັດຖະການ.

**ມາດຕາ 8 ການຢັ້ງຢືນການສຳຫຼວດວັດແທກທີ່ດິນ**

ຜູ້ທີ່ມີຈຸດປະສົງຂໍຢັ້ງຢືນພື້ນທີ່ດິນ ທີ່ກ່ຽວຂ້ອງກັບການເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ເປັນຕົ້ນ ການຢັ້ງຢືນພື້ນທີ່ໃນໄລຍະສຶກສາຄວາມເປັນໄປໄດ້, ສັນຍາພັດທະນາໂຄງການ, ສັນຍາສຳປະທານ, ຂຸດຄົ້ນ-ສຳຫຼວດ, ຂຸດຄົ້ນປຸງແຕ່ງ, ສັນຍາເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ໃຫ້ຍື່ນໜັງສືສະເໜີ ຫຼື ຄຳຮ້ອງ ຫາຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຈາກນັ້ນ, ຫ້ອງການ ກະຊວງ ອອກໜັງສືສະເໜີ ຫຼື ສະໂໜດ ນຳສົ່ງໃຫ້ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ເປັນເຈົ້າການປະສານສົມທົບກັບ ກົມປ່າໄມ້, ກົມປູກຝັງ, ພາກສ່ວນກ່ຽວຂ້ອງ ພາຍໃນກະຊວງ, ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ, ກະຊວງຮັບຜິດຊອບໂຄງການ ຫຼື ກິດຈະການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດຳເນີນການເກັບກຳຂໍ້ມູນກ່ຽວກັບເນື້ອທີ່, ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ, ຄວາມອຸດົມສົມບູນ ຫຼື ສະພາບຂອງປ່າໄມ້ ແລະ ຊີວະນາໆພັນ ລວມທັງການຕີລາຄາຜົນໄດ້ຜົນເສຍ, ມາດຕະການແກ້ໄຂຜົນກະທົບດ້ວຍການເສຍຄ່າຊົດເຊີຍຊີວະນາໆພັນ, ປູກປ່າທົດແທນ ແລະ ຄ່າບໍລິການລະບົບນິເວດປ່າໄມ້ ຈາກການຫັນປ່ຽນປ່າໄມ້ໃນເຂດດັ່ງກ່າວ ແລະ ສຳຫຼວດວັດແທກທີ່ດິນ ແລ້ວລາຍງານຫາຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເພື່ອສັງລວມລາຍງານຂໍທິດຊີ້ນຳຈາກການນຳ ກະຊວງ ພາຍໃນກຳນົດ ສາມ ວັນລັດຖະການ ນັບແຕ່ວັນທີໄດ້ຮັບໜັງສືລາຍງານຈາກກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ເປັນຕົ້ນໄປ.

ພາຍຫຼັງໄດ້ຮັບການເຫັນດີ ຈາກການນຳ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລ້ວ ໃຫ້ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ອອກໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ຈາກນັ້ນ, ໃຫ້ຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ອອກໜັງສືທາງລັດຖະການ ເພື່ອແຈ້ງຕອບ ໄປຍັງຜູ້ທີ່ສະເໜີຂໍຢັ້ງຢືນພື້ນທີ່ດິນ ພ້ອມທັງຄັດຕິດໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ພາຍໃນກຳນົດເວລາ ສອງ ວັນລັດຖະການ ນັບແຕ່ວັນທີໄດ້ຮັບເອກະສານຈາກການນຳ ກະຊວງ ເປັນຕົ້ນໄປ.

ໃນກໍລະນີ ຫາກເປັນການສະເໜີຂໍເພີ່ມແຮ່ທາດ ໃນໄລຍະການສຳຫຼວດ ແລະ ການປ່ຽນແປງຜູ້ຖືຮຸ້ນ ຊຶ່ງດຳເນີນໃນພື້ນທີ່ເກົ່າທີ່ໄດ້ຮັບອະນຸມັດແລ້ວ ແມ່ນບໍ່ຈຳເປັນຕ້ອງກວດກາ ແລະ ຢັ້ງຢືນທາງດ້ານພື້ນທີ່ຈາກກົມກ່ຽວຂ້ອງ ຄືນຕື່ມ ໂດຍມອບໃຫ້ຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ຄົ້ນຄວ້າ ແລ້ວລາຍງານການນຳ ກະຊວງ ພິຈາລະນາ ແລະ ໃຫ້ທິດຊີ້ນຳ ກ່ອນແຈ້ງຕອບພາກສ່ວນກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ທຸລະກິດກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ

**ມາດຕາ 9 ທຸລະກິດກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ**

ທຸລະກິດກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ແມ່ນ ການດຳເນີນກິດຈະການ ແລະ ການເຄື່ອນໄຫວ ທາງດ້ານທຸລະກິດ ກ່ຽວກັບການ ປູກຝັງ; ການປ້ອງກັນ ແລະ ກັກກັນພືດ; ລ້ຽງສັດ ແລະ ສັດຕະວະແພດ; ສັດນ້ຳ ແລະ ການປະມົງ; ທຸລະກິດກ່ຽວກັບປ່າໄມ້; ທຸລະກິດກ່ຽວກັບສັດປ່າ; ການບໍລິການໃຫ້ຄຳປຶກສາດ້ານກະສິກຳ

ແລະ ປ່າໄມ້; ຊົນລະປະທານ; ທຸລະກິດກ່ຽວກັບທີ່ດິນ; ຄອນໂດມິນຽມ; ການບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ; ຫ້ອງທົດລອງສິ່ງແວດລ້ອມ; ສິນເຊື່ອກາກບອນ; ທຸລະກິດກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ; ສະຫະກອນ; ຄັງແຮແນວພັນເຊື້ອ; ທຸລະກິດກ່ຽວກັບອຸຕຸນິຍົມ ແລະ ອຸທົກກະສາດ ລວມທັງທຸລະກິດເກັບຊື້, ນຳເຂົ້າ-ສົ່ງອອກ, ສົ່ງຜ່ານ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 10 ການອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ**

ຜູ້ທີ່ມີຈຸດປະສົງ ດຳເນີນທຸລະກິດກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ຕ້ອງຍື່ນໜັງສືສະເໜີ ຫຼື ຄຳຮ້ອງຫາຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອແຈ້ງຂຶ້ນທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ຈາກນັ້ນ, ໃຫ້ສະເໜີຕໍ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນາ ອອກໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ.

ການອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ປະກອບມີ 2 ຮູບແບບ ຄື:

1. ການອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ທີ່ຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ດຳເນີນການຄົ້ນຄວ້າອອກໃບອະນຸຍາດ ໂດຍກົງ ແມ່ນ ການຄົ້ນຄວ້າຂອງຫ້ອງການ ກະຊວງ ໂດຍບໍ່ຜ່ານການປະກອບຄຳເຫັນ ຈາກບັນດາກົມ, ກອງ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງ ປະກອບມີ ກິດຈະການທີ່ບໍ່ນອນໃນບັນຊີຄວບຄຸມ ແລະ ບໍ່ແມ່ນກິດຈະການສຳປະທານ ເຊັ່ນ: ປູກຝັງ; ການປ້ອງກັນ ແລະ ກັກກັນພືດ; ລ້ຽງສັດ ແລະ ສັດຕະວະແພດ; ສັດນ້ຳ ແລະ ການປະມົງ; ທຸລະກິດກ່ຽວກັບປ່າໄມ້; ທຸລະກິດກ່ຽວກັບສັດປ່າ ແລະ ກິດຈະການອື່ນ.

2. ການອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ທີ່ຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ອອກໃບອະນຸຍາດ ໂດຍຜ່ານການຄົ້ນຄວ້າປະກອບຄຳເຫັນ ຈາກບັນດາກົມ, ກອງ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງ ປະກອບມີ ດັ່ງນີ້:

- ກິດຈະການທີ່ນອນໃນບັນຊີຄວບຄຸມ ແລະ ກິດຈະການສຳປະທານ ກ່ຽວກັບການປູກຝັງ; ການປ້ອງກັນ ແລະ ກັກກັນພືດ; ລ້ຽງສັດ ແລະ ສັດຕະວະແພດ; ສັດນ້ຳ ແລະ ການປະມົງ; ທຸລະກິດກ່ຽວກັບປ່າໄມ້; ທຸລະກິດກ່ຽວກັບສັດປ່າ;
- ກິດຈະການ ກ່ຽວກັບການບໍລິການໃຫ້ຄຳປຶກສາດ້ານກະສິກຳ ແລະ ປ່າໄມ້; ຊົນລະປະທານ; ທຸລະກິດກ່ຽວກັບທີ່ດິນ; ຄອນໂດມິນຽມ; ການບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ; ຫ້ອງທົດລອງສິ່ງແວດລ້ອມ; ສິນເຊື່ອກາກບອນ; ທຸລະກິດກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ; ສະຫະກອນ; ຄັງແຮແນວພັນເຊື້ອ; ທຸລະກິດກ່ຽວກັບອຸຕຸນິຍົມ ແລະ ອຸທົກກະສາດ.

**ມາດຕາ 11 ເອກະສານປະກອບ ການອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ທີ່ຫ້ອງການ ກະຊວງດຳເນີນການຄົ້ນຄວ້າອອກໃບອະນຸຍາດ ໂດຍກົງ**

ການອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ທີ່ຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ດ□າເນີນການຄົ້ນຄວ້າອອກໃບອະນຸຍາດ ໂດຍກົງ ປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ພ້ອມດ້ວຍຮູບຂະໜາດ 3x4 ຈຳນວນ 2 ໃບ ຕາມແບບພິມທີ່ກຳນົດໄວ້;
2. ໃບທະບຽນວິສາຫະກິດ;
3. ບົດສະເໜີໂຄງການ ຫຼື ແຜນການດຳເນີນທຸລະກິດ;
4. ໃບຢັ້ງຢືນຖານະທາງດ້ານການເງິນ;
5. ເອກະສານອື່ນທີ່ກ່ຽວຂ້ອງ.

**ມາດຕາ 12 ຂັ້ນຕອນການອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ທີ່ຫ້ອງການ ກະຊວງ ດຳເນີນການຄົ້ນຄວ້າອອກໃບອະນຸຍາດ ໂດຍກົງ**

ການອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ທີ່ຫ້ອງການ ກະຊວງ ດຳເນີນການຄົ້ນຄວ້າອອກໃບອະນຸຍາດ ໂດຍກົງ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຮັບ ແລະ ກວດກາຄວາມຖືກຕ້ອງ ຂອງເອກະສານ

ພາຍຫຼັງຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ໄດ້ຮັບໜັງສືສະເໜີ ຫຼື ຄຳຮ້ອງ ຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ແລ້ວ ໃຫ້ນຳສົ່ງຫາພະແນກຄຸ້ມຄອງການລົງທຶນ ດຳເນີນການກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງເອກະສານ ພາຍໃນກຳນົດເວລາ ໜຶ່ງ ວັນລັດຖະການ ນັບແຕ່ໄດ້ຮັບໜັງສືສະເໜີ ຫຼື ຄຳຮ້ອງ ເປັນຕົ້ນໄປ. ໃນກໍລະນີເອກະສານບໍ່ຄົບຖ້ວນ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ໃຫ້ຜູ້ຂໍອະນຸຍາດດຳເນີນທຸລະກິດນັ້ນ ຊາບພາຍໃນກຳນົດເວລາ ສາມ ວັນລັດຖະການ ພ້ອມທັງອະທິບາຍເຫດຜົນໃຫ້ຊາບ.

2. ການພິຈາລະນາ ອອກໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ

ພາຍຫຼັງກວດກາເອກະສານຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ພະແນກຄຸ້ມຄອງການລົງທຶນ ດຳເນີນການຄົ້ນຄວ້າລາຍງານການນຳຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາ ອອກໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ພາຍໃນກຳນົດເວລາ ສາມ ວັນລັດຖະການ.

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ທີ່ໄດ້ກຳນົດໄວ້ໃນມາດຕານີ້ ແມ່ນເອກະສານຢັ້ງຢືນໃນການດຳເນີນທຸລະກິດ ທີ່ອອກໃຫ້ແກ່ນິຕິບຸກຄົນ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍວິສາຫະກິດ ຊຶ່ງມີອາຍຸການນຳໃຊ້ ສອງ ປີ. ນິຕິບຸກຄົນໃດ ມີຈຸດປະສົງຂໍຕໍ່ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ໃຫ້ຍື່ນຄຳຮ້ອງຫາຫ້ອງການກະຊວງ ກະສິກຳ ແລະ ສິ່ງແວດລ້ອມ ກ່ອນໃບອະນຸຍາດດັ່ງກ່າວ ຈະໝົດອາຍຸພາຍໃນກຳນົດເວລາ ສາມສິບ ວັນ ພ້ອມທັງປະກອບເອກະສານບົດສະຫຼຸບການເຄື່ອນໄຫວ ສອງ ປີຜ່ານມາ, ເອກະສານຢັ້ງຢືນການປະຕິບັດພັນທະພາສີ, ອາກອນ ແລະ ເອກະສານອື່ນທີ່ກ່ຽວຂ້ອງ. ໃນກໍລະນີ ຫາກບໍ່ສະເໜີຕໍ່ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ຕາມກຳນົດເວລາ ໃບອະນຸຍາດດັ່ງກ່າວ ບໍ່ມີຄຸນຄ່າທາງດ້ານກົດໝາຍ.

**ມາດຕາ 13 ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ທີ່ຫ້ອງການ ອອກໃບອະນຸຍາດ ໂດຍຜ່ານການຄົ້ນຄວ້າປະກອບຄຳເຫັນ ຂອງພາກສ່ວນກ່ຽວຂ້ອງ**

ການປະກອບເອກະສານ ຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ທີ່ຫ້ອງການ ອອກໃບອະນຸຍາດ ໂດຍຜ່ານການຄົ້ນຄວ້າປະກອບຄຳເຫັນ ຂອງພາກສ່ວນກ່ຽວຂ້ອງ ໃຫ້ປະຕິບັດຕາມ ນິຕິກຳທີ່ກ່ຽວຂ້ອງ ທີ່ຢູ່ໃນຄວາມຮັບຜິດຊອບ ຂອງບັນດາກົມ, ກອງ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ ທີ່ກຳນົດອອກ ຕາມແຕ່ລະກໍລະນີ.

**ມາດຕາ 14 ຂັ້ນຕອນການອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ທີ່ຫ້ອງການ ກະຊວງ ອອກໃບອະນຸຍາດ ໂດຍຜ່ານການຄົ້ນຄວ້າປະກອບຄຳເຫັນ ຂອງພາກສ່ວນກ່ຽວຂ້ອງ**

ການອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ທີ່ຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ອອກໃບອະນຸຍາດ ໂດຍຜ່ານການຄົ້ນຄວ້າປະກອບຄຳເຫັນ ຈາກບັນດາກົມ, ກອງ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຮັບ ແລະ ກວດກາຄວາມຖືກຕ້ອງ ຂອງເອກະສານ

ພາຍຫຼັງຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ໄດ້ຮັບໜັງສືສະເໜີ ຫຼື ຄຳຮ້ອງ ຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ໃຫ້ດຳເນີນການກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງເອກະສານ ພາຍໃນກຳນົດເວລາ ໜຶ່ງ ວັນລັດຖະການ ນັບແຕ່ໄດ້ຮັບໜັງສືສະເໜີ ຫຼື ຄຳຮ້ອງ ເປັນຕົ້ນໄປ ຈາກນັ້ນ, ໃຫ້ນຳສົ່ງບັນດາກົມ, ກອງ, ສະຖາບັນ ຫຼື ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງ ເພື່ອ

ດຳເນີນການຄົ້ນຄວ້າທາງດ້ານວິຊາການ ແລະ ປະຕິບັດຕາມຂັ້ນຕອນ, ເງື່ອນໄຂ ໃນແຕ່ລະກໍລະນີ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

2. ການພິຈາລະນາ ອອກໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ

ພາຍຫຼັງສຳເລັດການຄົ້ນຄວ້າທາງດ້ານວິຊາການແລ້ວ ໃຫ້ລາຍງານຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃນການສັງລວມລາຍງານການນຳກະຊວງ ເພື່ອພິຈາລະນາຕົກລົງ, ຫຼັງຈາກນັ້ນ ໃຫ້ຫ້ອງການກະຊວງ ອອກໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ຕາມແຕ່ກໍລະນີ. ຈາກນັ້ນ, ໃຫ້ສຳເນົາສົ່ງໃຫ້ບັນດາກົມ, ກອງ, ສະຖາບັນ ຫຼື ຫົວໜ່ວຍວິຊາການ ລະດັບສອງທີ່ຂຶ້ນກັບກະຊວງ ເພື່ອຄຸ້ມຄອງ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດທຸລະກິດດັ່ງກ່າວ ຕາມກົດໝາຍ ແລະ ລະ ບຽບການ.

ໃນກໍລະນີ ບັນດາກົມ, ກອງ, ສະຖາບັນ ຫຼື ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງ ຫາກຄົ້ນຄວ້າແລ້ວ ແຕ່ບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດໄດ້ ໃຫ້ລາຍງານມາຍັງຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເພື່ອແຈ້ງຕອບເປັນລາຍລັກອັກສອນ ໃຫ້ແກ່ຜູ້ສະເໜີຂໍໃບອະນຸຍາດດຳເນີນທຸລະກິດດັ່ງກ່າວຊາບ ພາຍໃນກຳນົດເວລາ ສອງ ວັນລັດຖະການ ນັບແຕ່ໄດ້ຮັບໜັງສືລາຍງານຈາກພາກສ່ວນກ່ຽວຂ້ອງ ເປັນຕົ້ນໄປ.

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ທີ່ໄດ້ກຳນົດໄວ້ໃນມາດຕານີ້ ມີອາຍຸການນຳໃຊ້ ແລະ ສາມາດຕໍ່ໄດ້ຕາມແຕ່ລະກໍລະນີ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 4
## ການອະນຸຍາດສ້າງຕັ້ງ
## ແລະ ດຳເນີນກິດຈະການໂຮງງານກະສິກຳ ແລະ ປ່າໄມ້

### ມາດຕາ 15 ໂຮງງານກະສິກຳ ແລະ ປ່າໄມ້

ໂຮງງານກະສິກຳ ແລະ ປ່າໄມ້ ແມ່ນ ການດຳເນີນກິດຈະການໂຮງງານກະສິກຳ ແລະ ປ່າໄມ້ ທີ່ຂະແໜງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ອອກອະນຸຍາດສ້າງຕັ້ງໂຮງງານ ແລະ ອອກໃບຢັ້ງຢືນດຳເນີນກິດຈະການໂຮງງານກະສິກຳ ແລະ ປ່າໄມ້ ແຕ່ລະປະເພດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 16 ການອະນຸຍາດສ້າງຕັ້ງໂຮງງານກະສິກຳ ແລະ ປ່າໄມ້

ຜູ້ທີ່ມີຈຸດປະສົງ ດຳເນີນທຸລະກິດ ກ່ຽວກັບກິດຈະການໂຮງງານກະສິກຳ ແລະ ປ່າໄມ້ ຕ້ອງຍື່ນໜັງສືສະເໜີ ຫຼື ຄຳຮ້ອງ ຫາຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອແຈ້ງຂຶ້ນທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ຈາກນັ້ນ, ໃຫ້ສະເໜີຕໍ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນາອອກຂໍ້ຕົກລົງອະນຸຍາດສ້າງຕັ້ງໂຮງງານກະສິກຳ ແລະ ປ່າໄມ້.

### ມາດຕາ 17 ປະເພດໂຮງງານກະສິກຳ ແລະ ປ່າໄມ້

ໂຮງງານກະສິກຳ ແລະ ປ່າໄມ້ ປະກອບມີປະເພດ ດັ່ງນີ້:

1. ໂຮງງານຜະລິດອາຫານສັດ;
2. ໂຮງງານຜະລິດຢາສັດຕະວະແພດ;
3. ໂຮງງານອຸດສາຫະກຳປຸງແຕ່ງໄມ້;
4. ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;
5. ໂຮງງານອຸດສາຫະກຳປຸງແຕ່ງຢາງພາລາ;
6. ໂຮງງານປຸງແຕ່ງພືດ;
7. ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ;

8. ໂຮງງານຜະລິດຝຸ່ນ;

9. ໂຮງງານປຸງແຕ່ງຜະລິດຕະພັນສັດ;

10. ໂຮງງານອື່ນກ່ຽວກັບກະສິກຳ ແລະ ປ່າໄມ້.

ໂຮງງານກະສິກຳ ແລະ ປ່າໄມ້ ແຕ່ລະປະເພດ ໄດ້ກຳນົດໄວ້ໃນນິຕິກຳຕ່າງຫາກ.

**ມາດຕາ 18 ເອກະສານປະກອບການອະນຸຍາດສ້າງຕັ້ງໂຮງງານກະສິກຳ ແລະ ປ່າໄມ້**

ການປະກອບເອກະສານ ຂໍອະນຸຍາດດຳເນີນສ້າງຕັ້ງໂຮງງານກະສິກຳ ແລະ ປ່າໄມ້ ໃຫ້ປະຕິບັດຕາມນິຕິກຳທີ່ກ່ຽວຂ້ອງ ທີ່ຢູ່ໃນຄວາມຮັບຜິດຊອບຂອງບັນດາກົມ, ກອງ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງ ທີ່ກຳນົດອອກ ຕາມແຕ່ລະກໍລະນີ.

**ມາດຕາ 19 ຂັ້ນຕອນການອະນຸຍາດສ້າງຕັ້ງໂຮງງານກະສິກຳ ແລະ ປ່າໄມ້**

ການອະນຸຍາດສ້າງຕັ້ງໂຮງງານກະສິກຳ ແລະ ປ່າໄມ້ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຮັບ ແລະ ກວດກາຄວາມຖືກຕ້ອງ ຂອງເອກະສານ

ພາຍຫຼັງຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ໄດ້ຮັບໜັງສືສະເໜີ ຫຼື ຄຳຮ້ອງ ຂໍອະນຸຍາດສ້າງຕັ້ງໂຮງງານກະສິກຳ ແລະ ປ່າໄມ້ ໃຫ້ດຳເນີນການກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງເອກະສານພາຍໃນກຳນົດເວລາ ໜຶ່ງ ວັນລັດຖະການ ນັບແຕ່ໄດ້ຮັບໜັງສືສະເໜີ ຫຼື ຄຳຮ້ອງ ເປັນຕົ້ນໄປ ຈາກນັ້ນ, ໃຫ້ນຳສົ່ງບັນດາກົມ, ກອງ, ສະຖາບັນ ຫຼື ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງ ເພື່ອດຳເນີນການຄົ້ນຄວ້າທາງດ້ານວິຊາການ ແລະ ປະຕິບັດຕາມຂັ້ນຕອນ, ເງື່ອນໄຂ ໃນແຕ່ລະກໍລະນີ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

2. ການພິຈາລະນາ ອອກຂໍ້ຕົກລົງອະນຸຍາດສ້າງຕັ້ງໂຮງງານກະສິກຳ ແລະ ປ່າໄມ້

ພາຍຫຼັງສຳເລັດການຄົ້ນຄວ້າທາງດ້ານວິຊາການແລ້ວ ໃຫ້ລາຍງານຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເພື່ອສັງລວມລາຍງານການນຳກະຊວງດັ່ງກ່າວ ພິຈາລະນາຕົກລົງ ຕາມແຕ່ກໍລະນີ. ຈາກນັ້ນ ໃຫ້ສຳເນົາຂໍ້ຕົກລົງ ແລະ ສຳນວນເອກະສານ ສົ່ງໃຫ້ບັນດາກົມ, ກອງ, ສະຖາບັນ ຫຼື ຫົວໜ່ວຍວິຊາການລະດັບສອງທີ່ຂຶ້ນກັບກະຊວງ ເພື່ອຊຸກຍູ້, ຄຸ້ມຄອງ ແລະ ຕິດຕາມ ກວດກາການຈັດຕັ້ງປະຕິບັດພາຍໃນກຳນົດເວລາເກົ້າສິບ ວັນ ນັບແຕ່ວັນທີ່ໄດ້ອອກຂໍ້ຕົກລົງ ເປັນຕົ້ນໄປ. ຖ້າໝົດກຳນົດເວລາແລ້ວ ຫາກໂຮງງານດັ່ງກ່າວ ໄດ້ດຳເນີນໄປຕາມເງື່ອນໄຂ ຂອງການອະນຸຍາດສ້າງຕັ້ງໂຮງງານກະສິກຳ ແລະ ປ່າໄມ້ ແລ້ວ ໃຫ້ພິຈາລະນາອອກໃບຢັ້ງຢືນການດຳເນີນກິດຈະການໂຮງງານ ຕາມກົດໝາຍ ແລະ ລະບຽບການ.

ໃນກໍລະນີ ບັນດາກົມ, ກອງ, ສະຖາບັນ ຫຼື ຫົວໜ່ວຍວິຊາການລະດັບສອງທີ່ຂຶ້ນກັບກະຊວງ ຫາກຄົ້ນຄວ້າແລ້ວ ແຕ່ບໍ່ສາມາດອອກໃບອະນຸຍາດສ້າງຕັ້ງໂຮງງານກະສິກຳ ແລະ ປ່າໄມ້ ໄດ້ ໃຫ້ລາຍງານມາຍັງຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເພື່ອແຈ້ງຕອບເປັນລາຍລັກອັກສອນ ໃຫ້ແກ່ຜູ້ສະເໜີຂໍໃບອະນຸຍາດສ້າງຕັ້ງໂຮງງານດັ່ງກ່າວ ຊາບ ພາຍໃນກຳນົດເວລາ ສອງ ວັນລັດຖະການ ນັບແຕ່ໄດ້ຮັບໜັງສືລາຍງານຈາກພາກສ່ວນກ່ຽວຂ້ອງ ເປັນຕົ້ນໄປ.

**ມາດຕາ 20 ຂໍ້ຕົກລົງ ແລະ ໃບຢັ້ງຢືນດຳເນີນກິດຈະການໂຮງງານກະສິກຳ ແລະ ປ່າໄມ້**

ຂໍ້ຕົກລົງອະນຸຍາດສ້າງຕັ້ງໂຮງງານກະສິກຳ ແລະ ປ່າໄມ້ ແມ່ນ ເອກະສານຢັ້ງຢືນທາງດ້ານກົດໝາຍ ໃຫ້ແກ່ຜູ້ທີ່ໄດ້ຮັບອະນຸຍາດສ້າງຕັ້ງໂຮງງານກະສິກຳ ແລະ ປ່າໄມ້ ຕາມແຕ່ລະປະເພດ ທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້. ຂໍ້ຕົກລົງອະນຸຍາດສ້າງຕັ້ງໂຮງງານກະສິກຳ ແລະ ປ່າໄມ້ ມີອາຍຸການນຳໃຊ້ຕະຫຼອດໄລຍະການດຳເນີນກິດຈະການໂຮງງານ.

ໃບຢັ້ງຢືນດຳເນີນກິດຈະການໂຮງງານກະສິກຳ ແລະ ປ່າໄມ້ ແມ່ນ ເອກະສານຢັ້ງຢືນດ້ານມາດຕະຖານ ແລະ ການຜະລິດ ຂອງໂຮງງານ ທີ່ອອກໃຫ້ແກ່ຜູ້ໄດ້ຮັບຂໍ້ຕົກລົງສ້າງຕັ້ງໂຮງງານກະສິກຳ ແລະ ປ່າໄມ້ ພາຍຫຼັງ

ໄດ້ສຳເລັດການກໍ່ສ້າງ, ຕິດຕັ້ງເຄື່ອງຈັກ ແລະ ຜ່ານຂະບວນການຜະລິດທົດລອງແລ້ວ ຊຶ່ງມີອາຍຸການນຳໃຊ້ ສາມປີ ແລະ ສາມາດຕໍ່ໄດ້.

ຜູ້ທີ່ມີຈຸດປະສົງຂໍຕໍ່ໃບຢັ້ງຢືນດຳເນີນກິດຈະການໂຮງງານກະສິກຳ ແລະ ປ່າໄມ້ ໃຫ້ຍື່ນຄຳຮ້ອງຫາບັນດາກົມ, ກອງ, ສະຖາບັນ ຫຼື ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງ ຕາມທີ່ໄດ້ກຳນົດໄວ້ໃນນິຕິກຳທີ່ກ່ຽວຂ້ອງ.

## ໝວດທີ 5
## ການຄຸ້ມຄອງ, ການປົກຮັກສາ ແລະ ວິທີເກັບມ້ຽນ ສຳນວນເອກະສານ

### ມາດຕາ 21 ການຄຸ້ມຄອງສຳນວນເອກະສານ

ການຄຸ້ມຄອງສຳນວນເອກະສານ ແມ່ນ ການເກັບຮັກສາສຳນວນເອກະສານ ໄວ້ໃນລະບົບຖານຂໍ້ມູນໃຫ້ມີຄວາມປອດໄພ ຢູ່ຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຢ່າງລວມສູນ ແລະ ສຳເນົາສຳນວນເອກະສານແຕ່ລະປະເພດການລົງທຶນທີ່ກ່ຽວຂ້ອງ ສົ່ງໃຫ້ບັນດາກົມ, ກອງ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງທີ່ຂຶ້ນກັບກະຊວງ ໃນການຄຸ້ມຄອງ ແລະ ຕິດຕາມ ກວດກາ ການເຄື່ອນໄຫວ ແລະ ການປ່ຽນແປງ ກ່ຽວກັບການສະເໜີຂໍລົງທຶນ ຕາມກົນໄກການຈັດຕັ້ງປະຕິບັດວຽກງານການລົງທຶນ ພາຍໃນກະຊວງກະສິກຳ ແລະ ສິ່ງແວດລ້ອມ.

### ມາດຕາ 22 ການປົກຮັກສາສຳນວນເອກະສານ

ສຳນວນເອກະສານຕາມກົນໄກການຈັດຕັ້ງປະຕິບັດວຽກງານການລົງທຶນ ພາຍໃນກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕ້ອງປົກປັກຮັກສາໃຫ້ມີຄວາມປອດໄພ ຢູ່ໃນລະບົບເອເລັກໂຕຣນິກ ແລະ ລະບົບເຈ້ຍ ໂດຍບໍ່ໃຫ້ເສື່ອມຄຸນນະພາບ, ຂາດສ້ອຍ, ຕົກໂພນກ ແລະ ຕົກເຮ່ຍເສຍຫາຍ ຕະຫຼອດອາຍຸຂອງການດຳເນີນກິດຈະການລົງທຶນ ຕາມກົນໄກການຈັດຕັ້ງປະຕິບັດວຽກງານການລົງທຶນ ພາຍໃນກະຊວງ.

### ມາດຕາ 23 ການເກັບຮັກສາສຳນວນເອກະສານ

ພາຍຫຼັງທີ່ໄດ້ສຳເລັດການຄົ້ນຄວ້າ ປະກອບຄຳເຫັນຕາມກົນໄກປະຕູດຽວ, ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ, ຂໍ້ຕົກລົງອະນຸຍາດສ້າງຕັ້ງໂຮງງານ ແລະ ໃບຢັ້ງຢືນດຳເນີນກິດຈະການໂຮງງານກະສິກຳ ແລະ ປ່າໄມ້ ຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕ້ອງສຳເນົາຖ່າຍທຸກເອກະສານຢູ່ຖານຂໍ້ມູນໃນລະບົບເອເລັກໂຕຣນິກ ແລະ ລະບົບເຈ້ຍ ຕາມການສະເໜີຂໍລົງທຶນຕາມກົນໄກການຈັດຕັ້ງປະຕິບັດວຽກງານການລົງທຶນ ພາຍໃນກະຊວງກະສິກຳ ແລະ ສິ່ງແວດລ້ອມ. ສຳລັບການເກັບຮັກສາສຳນວນເອກະສານຂອງບັນດາກົມ, ກອງ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງ ໃຫ້ປະຕິບັດຕາມນິຕິກຳທີ່ກ່ຽວຂ້ອງ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

### ມາດຕາ 24 ການຈັດຕັ້ງປະຕິບັດ

ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງ ເປັນຜູ້ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 25 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 29 ກັນຍາ 2026 ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງວ່າດ້ວຍກົນໄກຄຸ້ມຄອງການລົງທຶນ ໃນຂະແໜງກະສິກໍາ ແລະ ປ່າໄມ້ ສະບັບເລກທີ 4378/ກປ, ລົງວັນທີ 26 ຕຸລາ 2022 ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເອກະສານ ແລະ ລະບົບຖານຂໍ້ມູນ ໂຮງງານປຸງແຕ່ງກະສິກໍາ ແລະ ປ່າໄມ້ ສະບັບເລກທີ 3975/ກປ, ລົງວັນທີ 09 ກັນຍາ 2022.

ຂໍ້ຕົກລົງ ຫຼື ນິຕິກໍາໃດ ທີ່ກໍານົດກ່ຽວກັບກົນໄກການຈັດຕັ້ງປະຕິບັດວຽກງານການລົງທຶນ ພາຍໃນກະຊວງກະສິກໍາ ແລະ ສິ່ງແວດລ້ອມ ໃນໄລຍະຜ່ານມາ ມອບໃຫ້ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງ ເປັນເຈົ້າການປະສານສົມທົບກັບ ຫ້ອງການກະຊວງກະສິກໍາ ແລະ ສິ່ງແວດລ້ອມ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ປັບປຸງໃຫ້ສອດຄ່ອງກັບຂໍ້ຕົກລົງສະບັບນີ້.

ລັດຖະມົນຕີ

ປອ. ລິນຄໍາ ດວງສະຫວັນ